- ຮັບຮູ້, ກໍາໄດ້ ແລະເປັນເອກະພາບກັບແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມີຄວາມສາມາດໃນການສຶກສາອົບຮົມ, ປຸກລະດົມປະຊາຊົນໃຫ້ເຄົາລົບ ແລະປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ;

- ມີບົດບາດໃນການເຕົ້າໂຮມຄວາມສາມັກຄີພາຍໃນບ້ານ, ສາມາດປຸກລະດົມ, ຂົນຂວາຍປະຊາຊົນເຂົ້າໃນການເຄື່ອນໄຫວປະຕິບັດວຽກງານເພື່ອຜົນປະໂຫຍດສ່ວນລວມຂອງບ້ານກໍຄືຂອງປະເທດຊາດ;

- ມີຄວາມສາມາດ, ພອນສະຫວັນໃນການສຶກສາອົບຮົມ ແລະແກ້ໄຂຂໍ້ຂັດແຍ່ງດ້ວຍການປະນີປະນອມໂດຍສັນຕິວິທີ, ບໍ່ມີແນວຄິດລໍາອຽງ ຫຼືອຽງຊ້າຍອຽງຂວາ.

## ມາດຕາ 10. ຫົວໜ້າ ແລະຮອງຫົວໜ້າໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ຫົວໜ້າໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນຜູ້ທີ່ໄດ້ຮັບການສະໜັບສະໜູນຈາກສະມາຊິກຂອງໜ່ວຍໄກ່ເກ່ຍຫຼາຍກວ່າໝູ່, ມີຄວາມສາມາດຈັດຕັ້ງ ແລະນໍາພາໜ່ວຍໄກ່ເກ່ຍປະຕິບັດໜ້າທີ່ວຽກໄດ້ດີ, ເປັນຄົນທຸງເຕົ້າໂຮມຄວາມສາມັກຄີພາຍໃນໜ່ວຍໄກ່ເກ່ຍ ແລະຮູ້ຍາດແຍ່ງຄໍາເຫັນຂອງອົງການຈັດຕັ້ງ ຫຼືບຸກຄົນຕ່າງໆໄດ້ດີ.

ຮອງຫົວໜ້າໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນບຸກຄົນທີ່ມີມາດຖານຄົບຖ້ວນຖັດຈາກຜູ້ເປັນຫົວໜ້າໜ່ວຍໄກ່ເກ່ຍທີ່ໄດ້ກ່າວມາເທິງນີ້.

## ມາດຕາ 11. ອາຍຸການ

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີອາຍຸການເທົ່າກັນກັບອາຍຸການຂອງນາຍບ້ານ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ.

# ໝວດທີ V
# ຫຼັກການ ແລະລະບອບແບບແຜນວິທີເຮັດວຽກ

## ມາດຕາ 12. ຫຼັກການ

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານເຄື່ອນໄຫວວຽກງານຂອງຕົນຕາມຫຼັກການ ດັ່ງນີ້:

1. ເຮັດວຽກຕາມຫຼັກການປະນີປະນອມ ໂດຍຖືເອົາການສຶກສາອົບຮົມໃຫ້ຄູ່ກໍລະນີທີ່ຂັດແຍ່ງກັນມີຄວາມຕື່ນຕົວຍິນຍອມຕົກລົງແກ້ໄຂຂໍ້ຂັດແຍ່ງດ້ວຍກັນເອງເປັນຕົ້ນຕໍ;
2. ເຮັດວຽກເປັນໝູ່ຄະນະ, ຕົກລົງແກ້ໄຂບັນຫາຕ່າງໆຕາມສຽງສ່ວນຫຼາຍໂດຍມີການເສີມຂະຫຍາຍຄວາມຮັບຜິດຊອບຂອງບຸກຄົນ, ເຄື່ອນໄຫວວຽກງານຢ່າງມີແຜນການທີ່ແທດກັບຕົວຈິງ;
3. ສະຫຼຸບ, ຖອດຖອນບົດຮຽນເປັນປົກກະຕິໃນທຸກໆຄັ້ງພາຍຫຼັງໄດ້ໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງໃດໜຶ່ງເພື່ອປັບປຸງແກ້ໄຂດ້ານອ່ອນ, ເສີມຂະຫຍາຍດ້ານດີໃຫ້ທັນເວລາ.